ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

0485

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ /ອຄ.ກຄພນ.

ນະຄອນຫຼວງວຽງຈັນ, ວັນທີ 27 ເມສາ 2018

**ແຈ້ງການ**

**ເຖິງ:** ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ໃຫ້ສືບຕໍ່ເອົາໃຈໃສ່ຊີ້ນຳໃນການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ຢ່າງເປັນປົກກະຕິ.

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ, ສະບັບເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ກ່ຽວກັບການພິຈາລະນາຮັບຮອງເອົາການປັບຂຶ້ນຄ່າແຮງງານຂັ້ນຕ່ຳຂອງຜູ້ອອກແຮງງານ ຢູ່ ສປປ ລາວ, ສະບັບເລກທີ 560/ຫສນຍ.ກລຂ, ລົງວັນທີ 20 ເມສາ 2018.

ເພື່ອເປັນການສືບຕໍ່ຈັດຕັ້ງປະຕິບັດການຄຸ້ມຄອງ, ຕິດຕາມ, ກວດກາລາຄາສິນຄ້າ ແລະ ຄ່າບໍລິການ ພາຍຫຼັງການສະເຫຼີມສະຫຼອງເທດສະການບຸນປີໃໝ່ລາວ ພສ 2561 ທີ່ຜ່ານມາແລ້ວນັ້ນ, ເຫັນວ່າລາຄາສິນຄ້າໃນຂອບເຂດທົ່ວປະເທດຢູ່ໃນສະພາບປົກກະຕິ ແລະ ສາມາດຄຸ້ມຄອງໄດ້ໃນລະດັບທີ່ດີສົມຄວນ, ຊຶ່ງສະແດງອອກເຖິງການເປັນເຈົ້າການຂອງອຳນາດການປົກຄອງແຂວງ ກໍຄືຄະນະນຳຂອງພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ, ເມືອງ ທີ່ໄດ້ເອົາໃຈໃສ່ຢ່າງໃກ້ຊິດໃນການຊີ້ນຳ-ນຳພາແຕ່ງຕັ້ງພະນັກງານລົງຕິດຕາມ, ກວດກາລາຄາສິນຄ້າ ແລະ ຄ່າບໍລິການ ຢູ່ພາຍໃນຕະຫຼາດເປັນປົກກະຕິ ເພື່ອບໍ່ໃຫ້ເກີດມີສະພາບການຂຶ້ນລາຄາສິນຄ້າໂດຍພະລາການຂອງຜູ້ປະກອບການຊາວຄ້າ-ຂາຍ ໃນຊ່ວງໄລຍະບຸນປີໃໝ່ລາວຜ່ານມາ.

ສະນັ້ນ, ເພື່ອຮັກສາສະຖຽນລະພາບທາງດ້ານເສດຖະກິດໃຫ້ໝັ້ນຄົງ, ບໍ່ໃຫ້ມີຜົນກະທົບໄປສູ່ບັນຫາອື່ນໆ ທີ່ຈະກາຍເປັນການຫຍໍ້ທໍ້ໃນສັງຄົມ, ຮັບປະກັນໃຫ້ມີຄວາມສະຫງົບ, ຜູ້ບໍລິໂພກໄດ້ຮັບຄວາມເປັນທຳທາງດ້ານລາຄາ ປະລິມານ, ຄຸນນະພາບ ແລະ ທັງເປັນການປະຕິບັດພາລະບົດບາດຂອງຂະແໜງການໃນວຽກງານຕິດຕາມ, ກວດກາ, ຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ໂດຍສະເພາະແມ່ນສິນຄ້າທີ່ມີຜົນກະທົບໄວຕໍ່ຊີວິດການເປັນຢູ່ຂອງປະຊາຊົນ, ຫຼີກລ້ຽງການສວຍໂອກາດຂຶ້ນລາຄາ ເພື່ອເກງກຳໄລຂອງພໍ່ຄ້າມີກາງທີ່ສ້າງຄວາມປັ່ນປ່ວນທາງດ້ານລາຄາ, ຮັບປະກັນການສະໜອງໃຫ້ພຽງພໍກັບຄວາມຕ້ອງການຂອງຕະຫຼາດພາຍໃນປະເທດ.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ:**

1. ໃຫ້ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດເວົ້າລວມ, ເວົ້າສະເພາະແຂວງທີ່ຍັງບໍ່ທັນແຕ່ງຕັ້ງຄະນະຊີ້ນຳວຽກງານຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການຂັ້ນແຂວງ ແລະ ຂັ້ນເມືອງ ຕາມຂໍ້ຕົກລົງເລກທີ 71/ນຍ ນັ້ນ ແມ່ນໃຫ້ຮີບຮ້ອນແຕ່ງຕັ້ງຄະນະດັ່ງກ່າວ ເພື່ອສະເໜີຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາຮັບຮອງ ແລະ ໃຫ້ດຳເນີນກອງປະຊຸມຄັ້ງປະຖົມມະລຶກຂອງຕົນ ບົນພື້ນຖານການແບ່ງຄວາມຮັບຜິດຊອບ ຕາມຂອບເຂດສິດ ແລະ ພາລະບົດບາດຂອງພາກສ່ວນທີ່ກ່ຽວຢູ່ຂັ້ນແຂວງຕົນ.

2. ໃຫ້ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ເອົາໃຈໃສ່ຊີ້ນຳການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ເພື່ອບໍ່ໃຫ້ລາຄາເໜັງຕີງຂຶ້ນແບບບໍ່ມີເຫດຜົນເວົ້າລວມ, ເວົ້າສະເພາະແມ່ນເພື່ອຮອງຮັບການປັບຂຶ້ນຄ່າແຮງງານຂັ້ນຕ່ຳຂອງຜູ້ອອກແຮງງານ ຢູ່ ສປປ ລາວ ຂຶ້ນຈາກ 900.000 ກີບ (ເກົ້າແສນກີບ) ມາເປັນ 1.100.000 ກີບ (ໜຶ່ງລ້ານໜຶ່ງແສນກີບ) ຕໍ່ ຄົນ ຕໍ່ ເດືອນ, ຊຶ່ງຈະເລີ່ມປະຕິບັດໃນວັນທີ 01 ພຶດສະພາ 2018 ເປັນຕົ້ນໄປ. ພ້ອມດຽວກັນນັ້ນ, ສະເໜີໃຫ້ຄະນະຊີ້ນຳວຽກງານຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການຢູ່ຂັ້ນແຂວງ ແລະ ຂັ້ນເມືອງ ທີ່ໄດ້ຮັບການແຕ່ງຕັ້ງແລ້ວນັ້ນ ເຮັດພາລະບົດບາດຂອງຕົນເອງຢ່າງເຂັ້ມງວດ ລວມໄປເຖິງໂຄສະນາເຜີຍແຜ່ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງຢູ່ພາຍໃນທ້ອງຖິ່ນຕົນ.
3. ໃຫ້ສືບຕໍ່ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງຢູ່ພາຍໃນແຂວງ ເພື່ອຈັດຕັ້ງປະຕິບັດວຽກງານຕິດຕາມກວດກາ ແລະ ຄຸ້ມຄອງລາຄາສິນຄ້າ ທີ່ມີຜົນກະທົບໄວຕໍ່ຊີວິດການເປັນຢູ່ຂອງປະຊາຊົນຢູ່ພາຍໃນແຂວງຂອງຕົນ ເປັນຕົ້ນແມ່ນສິນຄ້າສະບຽງອາຫານ ເຊັ່ນ: ປະເພດຊີ້ນ, ປະເພດເຂົ້າກິນ, ປະເພດປາ, ປະເພດໄກ່ ແລະ ພືດຜັກອື່ນໆ ລວມທັງການສະໜອງເຄື່ອງອຸປະໂພກ-ບໍລິໂພກ ບົນພື້ນຖານຄວາມເປັນເອກະພາບ ແລະ ການມີສ່ວນຮ່ວມຂອງທຸກພາກສ່ວນ ພ້ອມທັງຮັບປະກັນການດູນດ່ຽງການສະໜອງ ແລະ ຄວາມຕ້ອງການ.
4. ໃຫ້ເປັນເຈົ້າການໃນການຄຸ້ມຄອງສິນຄ້າສະບຽງອາຫານ ປະເພດຊີ້ນ (ໝູ, ງົວ, ຄວາຍ, ໄກ່, ເປັດ ແລະ ປາ) ແລະ ພືດຜັກອື່ນໆ ທີ່ມີຄວາມຈຳເປັນຢູ່ພາຍໃນທ້ອງຖິ່ນຂອງຕົນ ໃຫ້ໄປຕາມກົນໄກຕະຫຼາດ ບົນພື້ນຖານການຄິດໄລ່ໂຄງປະກອບລາຄາໃນແຕ່ລະຂອດຢ່າງຊັດເຈນ ເຊັ່ນ: ລາຄາຕົ້ນທຶນ (ຜະລິດຢູ່ພາຍໃນ ແລະ ນຳເຂົ້າຈາກຕ່າງປະເທດ), ຂອດຂາຍຍົກ ແລະ ຂອດຂາຍຍ່ອຍ ຫຼື ຂອດບໍລິການ ເພື່ອຫຼີກເວັ້ນປັດໃຈການສວຍໂອກາດແບບບໍ່ມີເຫດຜົນ.
5. ໃຫ້ສືບຕໍ່ເປັນເຈົ້າການລະດົມ, ຊຸກຍູ້ ຜູ້ປະກອບການສະໜອງສິນຄ້າປະເພດສະບຽງອາຫານທີ່ຈຳເປັນດັ່ງກ່າວນັ້ນໃຫ້ພຽງພໍກັບຄວາມຕ້ອງການຂອງຜູ້ບໍລິໂພກ, ພ້ອມທັງສືບຕໍ່ຕິດຕາມ ແລະ ກວດກາ ຢ່າງເປັນປະຈຳໃນທ້ອງຕະຫຼາດຢູ່ພາຍໃນທ້ອງຖິ່ນຂອງຕົນ ດ້ວຍວິທີການແຕ່ງຕັ້ງໜູນວຽນພະນັກງານລົງໄປຕິດຕາມ, ກວດກາ ແລະ ຊີ້ນຳ ເປັນປົກກະຕິ.
6. ໃຫ້ຈັດຕັ້ງປະຕິບັດ ແລະ ແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໃນໄລຍະບຸນປະເພນີສຳຄັນຕ່າງໆຂອງຊາດກໍຄືໄລຍະການປັບຂຶ້ນຄ່າແຮງງານຂັ້ນຕ່ຳກ່ຽວກັບການຄຸ້ມຄອງລາຄາສິນຄ້າປະເພດດັ່ງກ່າວ ຢູ່ພາຍໃນທ້ອງຖິ່ນຕົນດ້ວຍຄວາມຮັບຜິດຊອບສູງ.
7. ໃຫ້ປະຕິບັດລະບົບລາຍງານການຈັດຕັ້ງປະຕິບັດວຽກງານດັ່ງກ່າວເຖິງກະຊວງອຸດສາຫະກຳ ແລະ ການຄ້າ (ກົມການຄ້າພາຍໃນ) ໃນເວລາອັນຄວນ ຖ້າຫາກມີສະພາບການເກີດຂຶ້ນ ເພື່ອພ້ອມກັນແກ້ໄຂບັນຫາດັ່ງກ່າວໄດ້ທັນກັບສະພາບການ.
8. ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຮກ ລັດຖະມົນຕີ

ບຸນມີ ມະນີວົງ

ບ່ອນນຳສົ່ງ:

- ຫ້ອງວ່າການສູນກາງພັກ 01 ສະບັບ (ເພື່ອຮັບຊາບ);
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ 01 ສະບັບ (ເພື່ອຮັບຊາບ);
- ຫ້ອງວ່າການປົກຄອງແຂວງໃນທົ່ວປະເທດ 01 ສະບັບ (ເພື່ອຊີ້ນຳໃນການຈັດຕັ້ງປະຕິບັດ);
- ຫ້ອງການ, ສະຖາບັນ ແລະ ບັນດາກົມ ອ້ອມຂ້າງກະຊວງ ອຄ ພາກສ່ວນ 01 ສະບັບ (ເພື່ອຮັບຊາບ);
- ສຳເນົາ 02 ສະບັບ.